ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

ເລກທີ 2592 /ກປ

ນະຄອນຫຼວງວຽງຈັນ, ວັນທີ 15 AUG 2014

# ຄຳສັ່ງ
## ຂອງລັດຖະມົນຕີ
## ກ່ຽວກັບ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ກວດກາຝຸ່ນ, ແນວພັນພືດ ແລະຢາຂ້າຫຍ້າ ລວມທັງຢາປາບສັດຕູພືດອື່ນໆ ທີ່ນຳໃຊ້ຢູ່ ສປປ ລາວ

ເຖິງ: - ທ່ານຫົວໜ້າຫ້ອງການ, ບັນດາກົມ ແລະສະຖາບັນອ້ອມຂ້າງກະຊວງກະສິກຳ ແລະປ່າໄມ້;
- ທ່ານ ຫົວໜ້າພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

- ອີງຕາມກົດໝາຍວ່າດ້ວຍກະສິກຳ ສະບັບເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມໜັງສືສະເໜີຂອງກົມປູກຝັງ ສະບັບເລກທີ 1023/ກປຝ, ລົງວັນທີ 30 ກໍລະກົດ 2014.

ໃນໄລຍະຜ່ານມາ, ບັນດາຂະແໜງການອ້ອມຂ້າງສູນກາງ ແລະອຳນາດການປົກຄອງທ້ອງຖິ່ນທຸກຂັ້ນ ໄດ້ໃຫ້ການຮ່ວມມືເປັນຢ່າງດີ ຕໍ່ກັບການຄຸ້ມຄອງ, ຕິດຕາມ ແລະກວດກາການນຳເຂົ້າປັດໄຈຮັບໃຊ້ການຜະລິດກະສິກຳ ເປັນຕົ້ນແມ່ນຝຸ່ນ, ແນວພັນພືດ ແລະຢາປາບສັດຕູພືດ ອັນໄດ້ເຮັດໃຫ້ຊາວກະສິກອນ ແລະຜູ້ປະກອບການໄດ້ຊົມໃຊ້ປັດໄຈຮັບໃຊ້ການຜະລິດທີ່ມີຄຸນນະພາບ, ຖືກຕ້ອງຕາມມາດຕະຖານເຕັກນິກ ແລະລະບຽບກົດໝາຍ ເຊິ່ງໄດ້ປະກອບສ່ວນເຂົ້າໃນການຍົກສະມັດຕະພາບການຜະລິດໃຫ້ສູງຂຶ້ນ, ສ້າງລາຍຮັບໃຫ້ຊາວກະສິກອນ ແລະຜູ້ປະກອບການ ໄດ້ເປັນຢ່າງດີ; ແຕ່ຄຽງຄູ່ກັນນັ້ນ ກໍຍັງມີຜູ້ປະກອບການຈຳນວນໜຶ່ງ ນຳເຂົ້າປັດໄຈຮັບໃຊ້ການຜະລິດ ເຊັ່ນ: ຝຸ່ນ, ແນວພັນພືດ ແລະຢາປາບສັດຕູພືດ ໂດຍສະເພາະຢາຂ້າຫຍ້າທີ່ຫ້າມນຳໃຊ້ ແຕ່ຊໍ້າພັດລັກລອບນຳເຂົ້າ, ຈຳໜ່າຍ ແລະນຳໃຊ້ ຢ່າງຊະຊາຍ ໂດຍບໍ່ຄຳນຶງເຖິງຜົນກະທົບຕໍ່ຄົນ, ສັດ, ພືດ ແລະສິ່ງແວດລ້ອມ ອັນໄດ້ສ້າງພາບພົດບໍ່ດີໃຫ້ແກ່ການຊີ້ນຳ - ນຳພາທາງດ້ານເຕັກນິກວິຊາການ ຂອງຂະແໜງການກະສິກຳ ແລະປ່າໄມ້, ເຮັດໃຫ້ຊາວກະສິກອນ ໄດ້ຮັບຜົນກະທົບທາງລົບ, ອັບປະໂຫຍດ, ຫຼຸບທຶນ, ເກີດມີໜີ້ສິນ ແລະສ້າງຄວາມຫຍຸ້ງຍາກໃຫ້ແກ່ສັງຄົມ ແລະປະເທດຊາດ.

ເພື່ອແກ້ໄຂບັນຫາດັ່ງກ່າວ, ແນໃສ່ບັນລຸຄາດໝາຍສູ່ຊົນຜະລິດກະສິກຳ ໂດຍສະເພາະການຜະລິດເຂົ້າລວມທັງ

ທົ່ວປະເທດ ບໍ່ຫຼຸດ 4,2 ລ້ານໂຕນໃນປີ 2015 ແລະ 5 ລ້ານໂຕນໃນປີ 2020,

## ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ອອກຄຳສັ່ງ:

1. ໃຫ້ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ຊີ້ນຳຂະແໜງປູກຝັງ, ດ່ານປ້ອງກັນພືດສາກົນ, ຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງ, ດ່ານປະເພນີ ແລະໜ່ວຍງານປູກຝັງເມືອງ ໃນການຄຸ້ມຄອງກວດກາການນຳເຂົ້າຝຸ່ນ, ແນວພັນພືດ ແລະຢາປາບສັດຕູພືດ ໂດຍສະເພາະຢາຂ້າຫຍ້າ ຈາກຕ່າງປະເທດ ເຂົ້າມາພາຍໃນທ້ອງຖິ່ນຂອງຕົນ ຢ່າງເຂັ້ມງວດ ຕາມເຕັກນິກ ແລະລະບຽບການ ໂດຍມີການປະສານສົມທົບກັບຂະແໜງການກ່ຽວຂ້ອງ ເປັນຕົ້ນຂະແໜງອຸດສາຫະກຳ ແລະການຄ້າ, ພາສີ, ປກສ ແລະອົງການປົກຄອງທ້ອງຖິ່ນທຸກຂັ້ນ;
2. ບໍ່ອະນຸຍາດໃຫ້ ໂຄງການພັດທະນາ ພາກລັດ, ພາກທຸລະກິດ ແລະຜູ້ປະກອບການ ທັງພາຍໃນ ແລະຕ່າງປະເທດນຳເຂົ້າຝຸ່ນ, ແນວພັນພືດ ແລະຢາປາບສັດຕູພືດ ໂດຍສະເພາະຢາຂ້າຫຍ້າ ທີ່ບໍ່ໄດ້ຈົດທະບຽນວິຊາການຕາມລະບຽບກົດໝາຍຂອງ ສປປ ລາວ;
3. ໃຫ້ ກົມປູກຝັງ ຈັດສົ່ງ ບັນຊີ ຝຸ່ນ, ແນວພັນພືດ ແລະຢາປາບສັດຕູພືດ ທີ່ໄດ້ຮັບການຈົດທະບຽນວິຊາການຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ ແລະບັນຊີຢາປາບສັດຕູພືດທີ່ໄດ້ຍົກເລີກນຳໃຊ້ໃນ ສປປ ລາວ ໃຫ້ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ເພື່ອແຈ້ງຕໍ່ໃຫ້ແກ່ ຂະແໜງປູກຝັງແຂວງ, ໜ່ວຍງານປູກຝັງເມືອງ ແລະດ່ານປ້ອງກັນພືດສາກົນ ໃຫ້ທັນພາຍໃນເດືອນມັງກອນຂອງທຸກໆປີ. ໃນກໍລະນີມີການຈົດທະບຽນພາຍຫຼັງຈັດສົ່ງບັນຊີໄປແລ້ວນັ້ນ ແມ່ນໃຫ້ກົມປູກຝັງ ຮີບຮ້ອນແຈກຢາຍ ໂດຍກົງຢ່າງທົ່ວເຖິງ ໃຫ້ແກ່ອົງການຄຸ້ມຄອງທຸກຂັ້ນ;
4. ໃຫ້ ກົມຄຸ້ມຄອງ ແລະພັດທະນາທີ່ດິນກະສິກຳ ເປັນເຈົ້າການຈັດຕັ້ງປະຕິບັດການວິໄຈ, ຢັ້ງຢືນຄຸນນະພາບ ແລະຄວາມຖືກຕ້ອງ ຂອງມາດຕະຖານຝຸ່ນ ສຳລັບການປູກຝັງ ທີ່ຜະລິດຢູ່ພາຍໃນ ແລະນຳເຂົ້າຈາກຕ່າງປະເທດ;
5. ໃຫ້ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ປະສານສົມທົບກັບ ຂະແໜງການກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນ ຊີ້ນຳຂະແໜງປູກຝັງແຂວງ, ຫ້ອງການກະສິກຳ ແລະປ່າໄມ້ເມືອງ, ໜ່ວຍງານປູກຝັງເມືອງ ໃນການຄຸ້ມຄອງ, ກວດກາການບໍລິການຈຳໜ່າຍຝຸ່ນ, ແນວພັນພືດ ແລະຢາປາບສັດຕູພືດ ໂດຍສະເພາະຢາຂ້າຫຍ້າ ພາຍໃນທ້ອງຖິ່ນຂອງຕົນ ຕາມລະບຽບກົດໝາຍ, ລວມທັງກວດກາລາດຕະເວັນພາຫະນະທີ່ບັນທຸກຝຸ່ນ, ຢາປາບສັດຕູພືດ ແລະແນວພັນພືດ ທີ່ເລາະຂາຍ ແລະຈຳໜ່າຍ ຕາມບ້ານ ແລະກຸ່ມບ້ານຕ່າງໆ ພາຍໃນທ້ອງຖິ່ນຂອງຕົນ;
6. ໃຫ້ ກົມປູກຝັງ ສ້າງຄູ່ມືການຄຸ້ມຄອງກວດກາຝຸ່ນ, ແນວພັນພືດ ແລະຢາປາບສັດຕູພືດ ໃຫ້ແກ່ ໜ່ວຍງານກວດກາຢາປາບສັດຕູພືດ ທຸກຂັ້ນ ແລະເຈົ້າໜ້າທີ່ປ້ອງກັນພືດປະຈຳດ່ານຊາຍແດນ ເພື່ອເປັນເຄື່ອງມືຄຸ້ມຄອງກວດກາທາງດ້ານເຕັກນິກວິຊາການ ໃນການປະຕິບັດວິຊາສະເພາະ ຕາມມາດຕະຖານສາກົນ;
7. ໃຫ້ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ຊີ້ນຳຂະແໜງປູກຝັງ ສົມທົບກັບຂະແໜງສົ່ງເສີມກະສິກຳ ແລະສະຫະກອນ, ສູນບໍລິການເຕັກນິກກະສິກຳ ແລະປ່າໄມ້ ແລະອົງການປົກຄອງທ້ອງຖິ່ນ

ເຜີຍແຜ່, ໃຫ້ຄວາມຮູ້ ແກ່ຊາວກະສິກອນ, ກຸ່ມຜະລິດ ແລະຜູ້ປະກອບການ ກ່ຽວກັບການເກັບຮັກສາ ແລະນຳໃຊ້ ຝຸ່ນ, ແນວພັນພືດ ແລະຢາປາບສັດຕູພືດ ໂດຍສະເພາະຢາຂ້າຫຍ້າ ຖືກຕ້ອງຕາມຫຼັກວິຊາການ;

8. ມອບໃຫ້ ບັນດາກົມ ແລະສະຖາບັນອ້ອມຂ້າງກະຊວງ, ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ມີຜົນສຳເລັດສູງ. ຜ່ານການຈັດຕັ້ງປະຕິບັດ ມີຂໍ້ສະດວກ, ຫຍຸ້ງຍາກແນວໃດ ໃຫ້ລາຍງານການນຳກະຊວງກະສິກຳ ແລະປ່າໄມ້ ຊາບເປັນປົກກະຕິ;

9. ຄຳສັ່ງສະບັບນີ້ ມີຜົນສັກສິດ ແລະນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້ ລັດຖະມົນຕີ

ວິໄລວັນ ພົມເຂ

ບ່ອນນຳສົ່ງ:

1. ຫ້ອງວ່າການສູນກາງພັກ 01 ສະບັບ (ເພື່ອລາຍງານ);
2. ຫ້ອງວ່າການລັດຖະບານ 01 ສະບັບ (ເພື່ອລາຍງານ);
3. ກະຊວງອຸດສາຫະກຳ ແລະການຄ້າ 01 ສະບັບ (ເພື່ອຊາບ);
4. ກະຊວງການເງິນ 01 ສະບັບ (ເພື່ອຊາບ);
5. ກະຊວງປ້ອງກັນຄວາມສະຫງົບ 01 ສະບັບ (ເພື່ອຊາບ);
6. ຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງວຽງຈັນ ບ່ອນລະ 01 ສະບັບ (ເພື່ອຊ່ວຍຊຸກຍູ້);
7. ດ່ານສາກົນ ບ່ອນລະ 01 ສະບັບ (ເພື່ອໃຫ້ຄວາມຮ່ວມມື);
8. ເກັບມ້ຽນ 01 ສະບັບ.